ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ
ຄັງເງິນແຫ່ງຊາດ

ເລກທີ 7323 /ຄງຊ
ນະຄອນຫຼວງວຽງຈັນ, ວັນທີ 13 ທັນວາ 2024

# ແຈ້ງການ

ເຖິງ : ທ່ານຫົວໜ້າ ຄັງເງິນປະຈຳແຂວງ, ນະຄອນຫຼວງ, ເມືອງ ແລະ ນະຄອນ ທີ່ນັບຖື

ເລື່ອງ : ການຄຸ້ມຄອງບັນຊີເງິນຝາກຂອງຄັງເງິນ, ຫົວໜ່ວຍງົບປະມານ, ອົງການບໍລິຫານວິຊາການ ແລະ ກອງທຶນຂອງລັດ ທີ່ເປີດ ແລະ ເຄື່ອນໄຫວໃນລະບົບທະນາຄານ.

- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຄັງເງິນແຫ່ງຊາດ ສະບັບເລກທີ 2828/ກງ ລົງວັນທີ 07 ສິງຫາ 2024;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການຮັບຮອງ ຮູບແບບການຈັດຕັ້ງປະຕິບັດບັນຊີລວມສູນຄັງເງິນ (TSA) ສະບັບເລກທີ 2211/ກງ, ລົງວັນທີ 24 ມິຖຸນາ 2024;
- ອີງຕາມ ຄຳແນະນຳກ່ຽວກັບການຄຸ້ມຄອງ ແລະ ນຳໃຊ້ ລະບົບຊຳລະພັນທະງົບປະມານແຫ່ງລັດ ແບບລວມສູນ (FinLink) ສະບັບເລກທີ 2266/ກງ, ລົງວັນທີ 28 ມິຖຸນາ 2024.

ເພື່ອເຮັດໃຫ້ ການຕິດຕາມ, ກວດກາ ແລະ ຄຸ້ມຄອງບັນຊີເງິນຝາກຂອງຄັງເງິນແຫ່ງຊາດ, ຫົວໜ່ວຍງົບປະມານ, ອົງການບໍລິຫານວິຊາການ ແລະ ກອງທຶນຂອງລັດ ທີ່ເປີດ ແລະ ເຄື່ອນໄຫວໃນລະບົບທະນາຄານ ໃຫ້ລວມສູນຢູ່ບັນຊີຄັງເງິນ ໃນຂອບເຂດທົ່ວປະເທດ. ຄັງເງິນແຫ່ງຊາດ ຈຶ່ງແຈ້ງມາຍັງທ່ານຊາບ ແລະ ປະຕິບັດ ດັ່ງນີ້:

1. ບໍ່ອະນຸຍາດໃຫ້ຄັງເງິນປະຈຳແຂວງ, ນະຄອນຫຼວງ, ເມືອງ-ນະຄອນ, ຫົວໜ່ວຍງົບປະມານ, ອົງການບໍລິຫານວິຊາການ ແລະ ກອງທຶນຂອງລັດ ດຳເນີນການເປີດບັນຊີໃໝ່ໃນລະບົບທະນາຄານ ກໍລະນີຫາກມີຄວາມຈຳເປັນເປີດບັນຊີເງິນຝາກໃໝ່ໃນລະບົບທະນາຄານ ໃຫ້ເຮັດໜັງສືລາຍງານ ແລະ ສະເໜີຄັງເງິນແຫ່ງຊາດ (ສູນກາງ) ເພື່ອຄົ້ນຄວ້າພິຈາລະນາອະນຸມັດ;
2. ບໍ່ອະນຸຍາດໃຫ້ຄັງເງິນປະຈຳແຂວງ, ນະຄອນຫຼວງ, ເມືອງ ແລະ ນະຄອນ ຢັ້ງຢືນການໂອນຍ້າຍບັນຊີເງິນເດືອນ, ເງິນອຸດໜູນ ແລະ ເງິນນະໂຍບາຍຕ່າງໆ ຂອງພະນັກງານ-ລັດຖະກອນ ຈາກທະນາຄານໜຶ່ງໄປຫາທະນາຄານອື່ນ;
3. ມອບໃຫ້ຄັງເງິນປະຈຳແຂວງ, ນະຄອນຫຼວງ, ເມືອງ ແລະ ນະຄອນ : ❶ ສັງລວມຄືນບັນດາບັນຊີເງິນຝາກຢູ່ທະນາຄານທີ່ບໍ່ໄດ້ເຄື່ອນໄຫວ ຫຼື ບໍ່ມີຄວາມຈຳເປັນນຳໃຊ້ ເພື່ອດຳເນີນການປິດບັນຊີເງິນຝາກດັ່ງກ່າວ ແລະ ໂອນຍອດເຫຼືອເຂົ້າບັນຊີທີ່ມີການເຄື່ອນໄຫວປະຈຳວັນ, ❷ ປະສານສົມທົບ ຫົວໜ່ວຍງົບປະມານ, ອົງການບໍລິຫານວິຊາການ ເພື່ອປິດການເຄື່ອນໄຫວບັນຊີເງິນຝາກ ທີ່ເປີດໄວ້ຢູ່ລະບົບທະນາຄານ ໂດຍບໍ່ໄດ້ຮັບອະນຸຍາດຈາກຫົວໜ້າຄັງເງິນແຫ່ງຊາດ ແລະ ໂອນຍອດເຫຼືອເຂົ້າບັນຊີໜີ້ຕ້ອງສົ່ງຂອງຄັງເງິນທີ່ເປີດຢູ່ທະນາຄານ ເພື່ອມາເຄື່ອນໄຫວຢູ່ໃນລະບົບຄັງເງິນ;
4. ມອບໃຫ້ຄັງເງິນປະຈຳທ້ອງຖິ່ນ ແຈ້ງໃຫ້ ຫົວໜ່ວຍງົບປະມານອ້ອມຂ້າງແຂວງ, ນະຄອນຫຼວງ, ເມືອງ-ນະຄອນ ບັນດາສາຂາ ແລະ ໜ່ວຍບໍລິການທະນາຄານ ຮັບຊາບ ແລະ ຈັດຕັ້ງປະຕິບັດຢ່າງເປັນເອກະພາບໃນຂອບເຂດທົ່ວປະເທດ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມແຈ້ງການສະບັບນີ້ໃຫ້ໄດ້ຮັບຜົນດີ.

**ຫົວໜ້າຄັງເງິນແຫ່ງຊາດ**

ກະຊວງການເງິນ
ຄັງເງິນແຫ່ງຊາດ

**ນ. ຍອດ ແພງສົມປັດ**